

# ຟາມສຸກຈະເລີນ

ຂ້າພະເຈົ້າຊື່ ທ້າວ ລິນ ສຸກຈະເລີນ ອາຍຸ 27 ປີ, ຮຽນຈົບປະລິນຍາຕີ ສາຍຄູພາສາລາວ-ວັນນະຄະດີ ຈາກວິທະຍາໄລຄູຄັງໄຂ. ເຂົ້າຮ່ວມກິດຈະກຳສົ່ງເສີມໄວໜຸ່ມໃຫ້ເຂົ້າເຖິງວຽກເຮັດງານທຳ ແລະ ເປັນຜູ້ລິເລີ່ມທຸລະກິດ ດ້ານກະສິກຳ ເພາະວ່າຢາກພັດທະນາຕົວເອງ ແລະ ຢາກໃຫ້ຕົວເອງ, ຄອບຄົວມີລາຍໄດ້ ແລະ ມີອາຊີບທີ່ໝັ້ນຄົງ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2019 ທັງໝົດແມ່ນ 10,000,000 ກີບ (ສິບລ້ານກີບຖ້ວນ).

**ປະເພດທຸລະກິດ:**

ຂ້າພະເຈົ້າເລືອກທຸລະກິດ ການລ້ຽງໄກ່ຊີ້ນດຳ ແລະ ລ້ຽງປານິນ, ປັດຈຸບັນແມ່ນ ເພາະກົບ, ປາດຸກ, ປາໄນ ຕື່ມອີກ, ການລ້ຽງເປັດ-ໄກ່ແມ່ນລຸດປະລິມານລົງ ມາລ້ຽງປາ ແລະ ກົບ ເພີ່ມຂຶ້ນ. ນອກຈາກນັ້ນແມ່ນປູກຜັກ, ໝາກເຜັດ, ໝາກອຶ, ໝາກແຕງ ເພີ່ມເຕີມ.

**ການນຳໃຊ້ທຶນ:**

ໃນປີ 2019 ຂ້າພະເຈົ້າໄດ້ຈົກໜອງປາ 2 ໜອງ ຂະໜາດ 50 x 20 ແມັດ, ຊື້ປານ້ອຍມາປ່ອຍຈຳນວນ 5,000 ໂຕ, ຂະຫຍາຍຄອກໄກ່ ແລະ ລ້ອມຮົ້ວຄອກໄກ່ໃຫຍ່, ສ້າງຄອກໄກ່ນ້ອຍຂະໜາດ 1 x 2 ແມັດ ຈຳນວນ 2 ຄອກ ແລະ ໄດ້ຊື້ພໍ່-ແມ່ພັນໄກ່ຊີ້ນດຳຈຳນວນ 25 ໂຕ.

**ເປົ້າໝາຍ:**

ມີແຜນວ່າຈະເພີ່ມສິນຄ້າທີ່ມີໃນຟາມຈາກທີ່ຂາຍພຽງໄກ່ຊີ້ນດຳ ແລະ ປານິນ ກໍ່ຈະຜະລິດໄກ່ນ້ອຍ, ປານ້ອຍ ແລະ ກົບນ້ອຍຂາຍ. ໃນຕໍ່ໜ້າມີແຜນຈະເອົາໂຊລາເຊວປັ່ນນ້ຳເພື່ອເພີ່ມອອກຊີເຈນໃນໜອງປາມາຕິດຕັ້ງ, ລ້ຽງໄກ່ພັນໄຂ່ ແລະ ໝູຕື່ມ.

**ບັນຫາທີ່ພົບພໍ້:**

ອາກາດໜາວໃນຊ່ວງທີ່ປ່ອຍປານ້ອຍ ຈຶ່ງເຮັດໃຫ້ປານ້ອຍຈຳນວນໜຶ່ງຕາຍ, ຫົວອາຫານ, ຮຳ ແລະ ສາລີ ມີການເພີ່ມລາຄາສູງ, ການລະບາດຂອງພະຍາດໂຄວິດ- 19 ເຮັດໃຫ້ແມ່ຄ້າບໍ່ເປີດຮ້ານຂາຍຫົວອາຫານ, ການປູກສາລີ ແລະ ມັນຕົ້ນໃນລະດູແລ້ງແມ່ນພົບຄວາມຫຍຸ້ງຍາກ ເພາະນ້ຳບໍ່ພຽງພໍ. ຈາກບັນຫາທີ່ກ່າວມາ ໄດ້ມີວິທີແກ້ໄຂບັນຫາຄື: ຕິດຕາມເບິ່ງສະພາບອາກາດກ່ອນທີ່ຈະປ່ອຍປາ, ເຮັດຝຸ່ນບົ່ມເປັນອາຫານໃຫ້ປາ, ປູກພືດຜັກຕ່າງໆ ເຊັ່ນ: ສາລີ, ມັນຕົ້ນ, ໝາກອຶ ໄວ້ໃຫ້ປາ ແລະ ໄກ່ກິນ ເພື່ອ ຫຼຸດຕົ້ນທຶນໃນການຊື້ຫົວອາຫານ. ໄດ້ນຳເຟືອງລົງໄປໃສ່ໜອງເປັນຈຸດໆ ເພື່ອເພີ່ມອຸນຫະພູມໃນໜອງ.

**ຜົນໄດ້ຮັບ:**

- ປີ 2020 ຂາຍໄກ່ນ້ອຍ 120 ຄູ່, ໄກ່ຊີ້ນ 70 ກິໂລ, ຂາຍປານ້ອຍ 1,500 ໂຕ, ປາຊີ້ນ 616 ກິໂລ ລວມເງິນໃນການຂາຍໄກ່ ແລະ ປາ ແມ່ນ 21,490,000 ກີບ.
- ປີ 2021 ຂາຍໄກ່ນ້ອຍ 50 ຄູ່ = 1,000,000 ກີບ, ໄກ່ໃຫຍ່ 30 ກິໂລ= 1,200,000 ກີບ, ປານິນຊີ້ນ 700 ກິໂລ= 14,000,000 ກີບ, ກົບນ້ອຍ 6,000 ໂຕ= 3,000,000 ກີບ, ປາດຸກນ້ອຍ 3,000 ໂຕ= 900,000 ກີບ, ປາໄນນ້ອຍ 7,000 ໂຕ= 2,100,000 ກີບ, ປານິນນ້ອຍ 5,000 ໂຕ= 1,500,000 ກີບ, ລວມທັງໝົດໃນປີ 2021 = 23,700,000 ກີບ.





